ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ ...1145.../ອຄ.ກຄພນ
ນະຄອນຫຼວງວຽງຈັນ, ວັນທີ..01..ທັນວາ 2021

# ຂໍ້ຕົກລົງ
# ວ່າດ້ວຍ ທຸລະກິດການຈຳໜ່າຍວັດຖຸມີຄ່າ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມການຄ້າພາຍໃນ ສະບັບເລກທີ 0711/ກຄພນ, ລົງວັນທີ 08 ຕຸລາ 2021.

### ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທຸລະກິດການຈຳໜ່າຍວັດຖຸມີຄ່າ ເພື່ອເຮັດໃຫ້ທຸລະກິດດັ່ງກ່າວດຳເນີນຢ່າງຖືກຕ້ອງ ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ ພ້ອມດ້ວຍຫຼັກການຂອງພາກພື້ນ ແລະ ສາກົນ ແນໃສ່ການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ດຳເນີນທຸລະກິດ, ຜູ້ຊົມໃຊ້ ແລະ ຜົນປະໂຫຍດຂອງລັດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ທຸລະກິດການຈຳໜ່າຍວັດຖຸມີຄ່າ

ທຸລະກິດການຈຳໜ່າຍວັດຖຸມີຄ່າ ແມ່ນທຸລະກິດການຊື້-ຂາຍ ແລະ ແລກປ່ຽນວັດຖຸມີຄ່າ ໂດຍຊື້ຈາກຜູ້ດຳເນີນທຸລະກິດນຳເຂົ້າ ຫຼື ຜູ້ຜະລິດ ຢູ່ພາຍໃນ ສປປ ລາວ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບ ທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ວັດຖຸມີຄ່າ** ໝາຍເຖິງ ວັດຖຸ ແລະ ສິ່ງຂອງທີ່ມີຄ່າເຊັ່ນ: ເງິນ ແລະ ຄໍາທີ່ເປັນຮູບປະພັນ, ເພັດ, ໄຂ່ມຸກ, ແກ້ວປະເສີດ, ຄໍາຂາວ ແລະ ເຄື່ອງອື່ນໆ ທີ່ເຮັດດ້ວຍໂລຫະປະເສີດ ຕາມລະຫັດອັດຕາພາສີ (HS Code) 7102, 7103, 7104, 7110, 7111, 7113, 7114, 7115 ແລະ 7116 ຍົກເວັ້ນຄໍາແທ່ງ, ຄໍາເມັດ, ເງິນແທ່ງ ແລະ ເງິນເມັດທີ່ບໍ່ເປັນຮູບປະພັນ;

2. **ໃບອະນຸຍາດດໍາເນີນທຸລະກິດ** ໝາຍເຖິງ ເອກະສານຢັ້ງຢືນສິດ ແລະ ພັນທະ ໃນການດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ ທີ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ອອກໃຫ້ຫົວໜ່ວຍທຸລະກິດ ທີ່ດໍາເນີນທຸລະກິດຈໍາໜ່າຍວັດຖຸມີຄ່າ ຢູ່ ສປປ ລາວ;

3. **ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ** ໝາຍເຖິງ ບຸກຄົນຜູ້ທີ່ໄດ້ຮັບຜົນປະໂຫຍດສຸດທ້າຍ ຈາກການເຄື່ອນໄຫວທຸລະກິດ, ກິດຈະກໍາ ຫຼື ທຸລະກໍາໃດໜຶ່ງ ກ່ຽວກັບ ການດໍາເນີນທຸລະກິດຈໍາໜ່າຍວັດຖຸມີຄ່າ ລວມທັງຜູ້ມີອໍານາດໃນການຄວບຄຸມ ການດໍາເນີນທຸລະກິດຈໍາໜ່າຍວັດຖຸມີຄ່າ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ນໍາໃຊ້ ສໍາລັບບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວດໍາເນີນທຸລະກິດຈໍາໜ່າຍວັດຖຸມີຄ່າ ຢູ່ ສປປ ລາວ.

## ໝວດທີ 2
## ການດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ

**ມາດຕາ 5 ເງື່ອນໄຂການດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ**

ການດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ ຕ້ອງມີເງື່ອນໄຂດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ມີໃບອະນຸຍາດດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ;
3. ມີເປີດບັນຊີເງິນຝາກຢູ່ທະນາຄານທຸລະກິດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກໍານົດ;
4. ມີທຶນສະໜອງແກ່ການດໍາເນີນທຸລະກິດໂດຍມີແຫຼ່ງທີ່ມາຢ່າງຈະແຈ້ງ ແລະ ຕ້ອງມີເງິນຝາກຢູ່ໃນບັນຊີທະນາຄານ ຢ່າງໜ້ອຍ 30% ຂອງທຶນຈົດທະບຽນ;
5. ສໍາລັບການລົງທຶນຂອງຕ່າງປະເທດ ຕ້ອງມີທຶນຈົດທະບຽນຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນນິຕິກໍາກ່ຽວກັບ ທຸລະກິດການຈໍາໜ່າຍສິນຄ້າ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ;
6. ຜູ້ດໍາເນີນທຸລະກິດ, ຄະນະອໍານວຍການ, ສະມາຊິກສະພາບໍລິຫານ ແລະ ຜູ້ຖືຮຸ້ນຕ້ອງມີປະຫວັດຈະແຈ້ງ ບໍ່ເຄີຍຖືກສານຕັດສິນລົງໂທດ ກ່ຽວກັບ ການກະທໍາຜິດຕາມທີ່ກໍານົດໄວ້ໃນມາດຕາ 8 ຂອງກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ສໍາລັບຫົວໜ່ວຍທຸລະກິດການຈໍາໜ່າຍວັດຖຸມີຄ່າ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ກ່ອນຂໍ້ຕົກລົງສະບັບນີ້ ຕ້ອງປັບປຸງໃຫ້ສອດຄ່ອງຕາມເງື່ອນໄຂ ທີ່ໄດ້ກໍານົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ພາຍໃນກໍານົດ ສອງ ປີ ນັບແຕ່ວັນທີຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ເປັນຕົ້ນໄປ.

**ມາດຕາ 6 ການປະກອບເອກະສານເພື່ອຂໍໃບອະນຸຍາດດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ**

ການສະເໜີຂໍໃບອະນຸຍາດດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ ໃຫ້ປະກອບເອກະສານສະເໜີຕໍ່ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ຫຼື ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ດັ່ງນີ້:

1. ໃບຄໍາຮ້ອງ ຕາມແບບພິມທີ່ ກົມການຄ້າພາຍໃນ ໄດ້ກໍານົດ;

2. ສໍາເນົາໃບທະບຽນວິສາຫະກິດ ແລະ ສໍາເນົາຊຸດຄໍາຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ;

3. ເອກະສານລາຍງານການເຄື່ອນໄຫວບັນຊີທາງການເງິນຂອງຜູ້ດໍາເນີນທຸລະກິດ ຫຼື ຂາຮຸ້ນ ໄລຍະສາມສິບ ວັນ ຍ້ອນຫຼັງ ແລະ ໜັງສືຢັ້ງຢືນຖານະການເງິນ ຈາກທະນາຄານທຸລະກິດ ທີ່ສ້າງຕັ້ງຢູ່ ສປປ ລາວ;

4. ໃບແຈ້ງໂທດຂອງຜູ້ດໍາເນີນທຸລະກິດ, ຄະນະບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຂາຮຸ້ນ ຕາມເງື່ອນໄຂທີ່ກໍານົດໃນຂໍ້ 6 ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 7 ການພິຈາລະນາອອກໃບອະນຸຍາດດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ**

ພາຍຫຼັງທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມທີ່ກໍານົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ ຕ້ອງພິຈາລະນາອອກໃບອະນຸຍາດດໍາເນີນທຸລະກິດ ພາຍໃນ ສາມວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ.

ໃນກໍລະນີເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນໃຫ້ແຈ້ງຜູ້ສະເໜີທັນທີເພື່ອນໍາໄປປັບປຸງແກ້ໄຂ.

ໃນກໍລະນີບໍ່ສາມາດອອກໃບອະນຸຍາດດັ່ງກ່າວ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນພາຍໃນ ສອງວັນລັດຖະການນັບແຕ່ວັນໄດ້ຮັບເອກະສານ.

**ມາດຕາ 8 ອາຍຸ, ການຕໍ່ອາຍຸ ແລະ ການດັດແກ້ເນື້ອໃນໃບອະນຸຍາດດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ**

ໃບອະນຸຍາດດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ ມີອາຍຸການນໍາໃຊ້ ຫ້າປີ ແລະ ສາມາດຕໍ່ອາຍຸໄດ້ ໂດຍປະກອບເອກະສານສະເໜີຂໍຕໍ່ອາຍຸກ່ອນວັນໝົດອາຍຸ ສາມສິບ ວັນ.

ການຕໍ່ອາຍຸ ແລະ ການດັດແກ້ເນື້ອໃນໃບອະນຸຍາດດໍາເນີນທຸລະກິດໃຫ້ປະກອບເອກະສານສະເໜີຕໍ່ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ຫຼື ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມທີ່ ກົມການຄ້າພາຍໃນ ໄດ້ກໍານົດ;

2. ໃບອະນຸຍາດດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ ສະບັບຕົ້ນ;

3. ໃບຢັ້ງຢືນການມອບພັນທະອາກອນປີຜ່ານມາ.

**ມາດຕາ 9 ການໂຈະ ແລະ ການຍົກເລີກໃບອະນຸຍາດດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ**

ໃບອະນຸຍາດດໍາເນີນທຸລະກິດການຈໍາໜ່າຍວັດຖຸມີຄ່າ ຈະຖືກໂຈະ ແລະ ຍົກເລີກ ໃນກໍລະນີ ດັ່ງນີ້:

1. ຜູ້ດໍາເນີນທຸລະກິດບໍ່ປະຕິບັດພັນທະຕາມທີ່ກໍານົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;

2. ຜູ້ດໍາເນີນທຸລະກິດສະເໜີຢຸດເຊົາການດໍາເນີນທຸລະກິດດ້ວຍຄວາມສະໝັກໃຈ;

3. ມີຄໍາຕັດສິນຂອງສານປະຊາຊົນໃຫ້ລົ້ມລະລາຍ ຫຼື ໃຫ້ຢຸດເຊົາການດໍາເນີນທຸລະກິດ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ

### ມາດຕາ 10 ສິດຂອງຜູ້ດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ

ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ ມີສິດດັ່ງນີ້:

1. ຊື້, ຂາຍວັດຖຸມີຄ່າ ຕາມທີ່ໄດ້ຮັບອະນຸຍາດ ໃນໃບອະນຸຍາດດຳເນີນທຸລະກິດ;
2. ສ້າງຕັ້ງສາຂາ ຫຼື ຕົວແທນຈຳໜ່າຍ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
3. ສະເໜີ ຫຼື ຮ້ອງຂໍຄວາມເປັນທຳ ໃນການແຂ່ງຂັນທາງທຸລະກິດທີ່ບໍ່ເປັນທຳ;
4. ສະເໜີຂໍຕໍ່ອາຍຸ, ດັດແກ້ເນື້ອໃນ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດ;
5. ສະເໜີສ້າງຕັ້ງສະມາຄົມ ກ່ຽວກັບທຸລະກິດການຈຳໜ່າຍວັດຖຸມີຄ່າ ຫຼື ເປັນສະມາຊິກສະມາຄົມດັ່ງກ່າວ ລວມທັງການເຂົ້າຮ່ວມສະມາຄົມ ຫຼື ກຸ່ມທຸລະກິດທາງການຄ້າ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
6. ໄດ້ຮັບສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

### ມາດຕາ 11 ພັນທະຂອງຜູ້ດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ

ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ ມີພັນທະ ດັ່ງນີ້:

1. ແຈ້ງເສຍອາກອນ ແລະ ພັນທະອື່ນຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
2. ສະໜອງແຜນດຳເນີນທຸລະກິດປະຈຳປີ ພາຍໃນ ເກົ້າສິບວັນ ນັບແຕ່ວັນທີອອກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍວັດຖຸມີຄ່າ ຕາມແບບພິມທີ່ກົມການຄ້າພາຍໃນໄດ້ກຳນົດ;
3. ສ້າງຂໍ້ກຳນົດ ຫຼື ກົດລະບຽບພາຍໃນ ກ່ຽວກັບການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
4. ສະຫຼຸບ ແລະ ລາຍງານສະຖິຕິການຊື້-ຂາຍຕົວຈິງ ສົ່ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ,ນະຄອນຫຼວງ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ. ບົດສະຫຼຸບປະຈຳຫົກເດືອນແມ່ນໃຫ້ສົ່ງກ່ອນ ວັນທີ 30 ພຶດສະພາ, ສ່ວນບົດສະຫຼຸບປະຈຳປີ ໃຫ້ສົ່ງກ່ອນວັນທີ 30 ທັນວາ ຂອງທຸກໆປີ. ກົມການຄ້າພາຍໃນ ສ້າງແບບຟອມໃຫ້ບັນດາຫົວໜ່ວຍທຸລະກິດການຈຳໜ່າຍວັດຖຸມີຄ່າ ສັງລວມ ແລະ ລາຍງານເປັນເອກະພາບໃນຂອບເຂດທົ່ວປະເທດ;
5. ເກັບຮັກສາສຳນວນເອກະສານຄົບຊຸດ ກ່ຽວກັບ ການອະນຸຍາດດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ ເຊັ່ນ: ຄຳຮ້ອງ, ໃບທະບຽນວິສາຫະກິດ, ເອກະສານລາຍງານການເຄື່ອນໄຫວບັນຊີທາງການເງິນ, ສັນຍາ ຫຼື ໃບຊື້-ຂາຍລະຫວ່າງຜູ້ຂາຍກັບຜູ້ຊື້, ເອກະສານເຊີນເຂົ້າຮ່ວມງານວາງສະແດງ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງໃນໄລຍະເວລາ ຫ້າປີ;
6. ເກັບກຳສັງລວມ ແລະ ສະໜອງຂໍ້ມູນລະອຽດຂອງລູກຄ້າຕົນທີ່ຢູ່ພາຍໃນ ແລະ ຕ່າງປະເທດ, ການເຮັດທຸລະກຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ປະຈຳປີ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ຕາມການຮ້ອງຂໍ;
7. ກໍລະນີມີການປ່ຽນແປງຜູ້ດຳເນີນທຸລະກິດ, ຄະນະອຳນວຍການ, ສະມາຊິກສະພາບໍລິຫານ ແລະຜູ້ຖືຮຸ້ນຕ້ອງສະເໜີມາຍັງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ທີ່ອອກໃບອະນຸຍາດດຳເນີນທຸລະກິດ;

**8.** ໃຫ້ການຮ່ວມມືໃນການຕິດຕາມກວດກາ ແລະ ສະໜອງຂໍ້ມູນໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ຂະແໜງການທີ່ກ່ຽວຂ້ອງອື່ນ ຕາມການສະເໜີ ຢ່າງບໍ່ມີເງື່ອນໄຂ;

**9.** ສະແດງລາຄາຊື້-ຂາຍ ແລະ ກຳນົດລາຄາເກັບຊື້ຄືນເປັນເງິນກີບ ພ້ອມທັງລະບຸເງື່ອນໄຂຢ່າງລະອຽດຈະແຈ້ງ ໃນໃບສັນຍາຊື້-ຂາຍທຸກຄັ້ງ;

**10.** ປະຕິບັດພັນທະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ການຄຸ້ມຄອງທຸລະກິດຈຳໜ່າຍວັດຖຸມີຄ່າ

### ມາດຕາ 12 ການຄຸ້ມຄອງທຸລະກິດການຈຳໜ່າຍວັດຖຸມີຄ່າ

ການຄຸ້ມຄອງທຸລະກິດການຈຳໜ່າຍວັດຖຸມີຄ່າ ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມການຄ້າພາຍໃນ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

### ມາດຕາ 13 ສິດ ແລະ ໜ້າທີ່ຂອງກົມການຄ້າພາຍໃນ

ກົມການຄ້າພາຍໃນມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບ ທຸລະກິດການຈຳໜ່າຍວັດຖຸມີຄ່າ ເພື່ອນຳສະເໜີຂັ້ນເທິງພິຈາລະນາ ໂດຍໃຫ້ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຫຼື ສະພາບການຂະຫຍາຍຕົວທາງເສດຖະກິດ ແລະ ສັງຄົມ ຂອງ ສປປ ລາວ;
2. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບ ທຸລະກິດການຈຳໜ່າຍວັດຖຸມີຄ່າ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດທົ່ວປະເທດ;
3. ຊີ້ນຳ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ປະສານພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ຕິດຕາມການເຄື່ອນໄຫວຂອງຫົວໜ່ວຍທຸລະກິດການຈຳໜ່າຍວັດຖຸມີຄ່າ ລວມທັງຕິດຕາມ, ສຶກສາອົບຮົມ, ກວດກາການປະຕິບັດສິດ ແລະ ພັນທະ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂອບເຂດທົ່ວປະເທດ;
4. ກ່າວເຕືອນ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດ;
5. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການເຄື່ອນໄຫວ ຂອງທຸລະກິດການຈຳໜ່າຍວັດຖຸມີຄ່າ ໃຫ້ຂັ້ນເທິງຮັບຊາບຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 14 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນະໂຍບາຍ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານກ່ຽວກັບທຸລະກິດການຈຳໜ່າຍວັດຖຸມີຄ່າ ໃຫ້ສັງຄົມຮັບຊາບຢ່າງ

ທົ່ວເຖິງໃນຂອບເຂດແຂວງ, ນະຄອນຫຼວງຂອງຕົນ;

2. ຄຸ້ມຄອງ ແລະ ຕິດຕາມກວດກາ ການເຄື່ອນໄຫວຂອງທຸລະກິດການຈຳໜ່າຍວັດຖຸມີຄ່າ ທີ່ສ້າງຕັ້ງຢູ່ແຂວງ, ນະຄອນຫຼວງ ໃນການປະຕິບັດພັນທະຂອງຕົນ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ຄົ້ນຄວ້າ ພິຈາລະນາ ອອກ, ດັດແກ້ເນື້ອໃນ, ຕໍ່ອາຍຸ, ໂຈະ, ຖອນ, ລຶບລ້າງ, ອອກຄືນໃໝ່ ໃບອະນຸຍາດດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ ທີ່ໄດ້ຂຶ້ນທະບຽນວິສາຫະກິດຢູ່ຂັ້ນສູນກາງ, ແຂວງ ຫຼື ນະຄອນຫຼວງ ຂອງຕົນ;

4. ກ່າວເຕືອນ, ສຶກສາອົບຮົມ ແລະ ໃຊ້ມາດຕະການຕໍ່ຜູ້ລະເມີດ;

5. ສະຫຼຸບ ແລະ ລາຍງານວຽກງານການຄຸ້ມຄອງການເຄື່ອນໄຫວ ຂອງທຸລະກິດການຈຳໜ່າຍວັດຖຸມີຄ່າທີ່ຕັ້ງຢູ່ແຂວງ, ນະຄອນຫຼວງ ໃຫ້ກົມການຄ້າພາຍໃນ ຢ່າງເປັນປົກກະຕິ;

6. ປະສານສົມທົບກັບຂະແໜງການກ່ຽວຂ້ອງ ໃນກໍລະນີພົບເຫັນຫົວໜ່ວຍທຸລະກິດຈຳໜ່າຍວັດຖຸມີຄ່າ ເຄື່ອນໄຫວບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນະໂຍບາຍ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບ ທຸລະກິດການຈຳໜ່າຍວັດຖຸມີຄ່າ ໃນຂອບເຂດເມືອງ, ນະຄອນຂອງຕົນ ຮັບຊາບຢ່າງທົ່ວເຖິງ;

2. ຄຸ້ມຄອງ ແລະ ຕິດຕາມກວດກາ ການເຄື່ອນໄຫວຂອງທຸລະກິດການຈຳໜ່າຍວັດຖຸມີຄ່າ ທີ່ຕັ້ງຢູ່ໃນເມືອງ, ນະຄອນຂອງຕົນ ໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ຄົ້ນຄວ້າ ພິຈາລະນາ ອອກ, ດັດແກ້ເນື້ອໃນ, ຕໍ່ອາຍຸ, ໂຈະ, ຖອນ, ລຶບລ້າງ, ອອກຄືນໃໝ່ ໃບອະນຸຍາດດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ ທີ່ໄດ້ຂຶ້ນທະບຽນວິສາຫະກິດຢູ່ຂັ້ນເມືອງ, ນະຄອນ ຂອງຕົນ;

4. ກ່າວເຕືອນ, ສຶກສາອົບຮົມ ແລະ ໃຊ້ມາດຕະການຕໍ່ຜູ້ລະເມີດ;

5. ສະຫຼຸບ ແລະ ລາຍງານວຽກງານການຄຸ້ມຄອງການເຄື່ອນໄຫວຂອງທຸລະກິດການຈຳໜ່າຍວັດຖຸມີຄ່າທີ່ຕັ້ງຢູ່ ເມືອງ, ນະຄອນ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຂອງຕົນ ຢ່າງເປັນປົກກະຕິ;

6. ປະສານສົມທົບກັບຂະແໜງການກ່ຽວຂ້ອງ ໃນກໍລະນີພົບເຫັນຫົວໜ່ວຍທຸລະກິດຈຳໜ່າຍວັດຖຸມີຄ່າ ເຄື່ອນໄຫວບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 16 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ຫຼື ນະໂຍບາຍອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 17 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການກ່າວຕັກເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າພາຍໃນ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ມີປະສິດທິຜົນສູງ.

**ມາດຕາ 19 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີ**

ປອ.ຄຳແພງ ໄຊສົມແພງ